ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------==========---------

ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ເລກທີ.518./ຖວທ.

ນະຄອນຫຼວງວຽງຈັນ, ວັນທີ.13/.6./...2012

# ຂໍ້ຕົກລົງ

## ວ່າດ້ວຍ ລະບຽບການຂໍອະນຸຍາດນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນສິ່ງພິມ

- ອີງຕາມກົດໝາຍວ່າດ້ວຍການພິມຈຳໜ່າຍສະບັບເລກທີ 05/ສພຊ,ລົງວັນທີ 9 ທັນວາ 2008
- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005.
- ອີງຕາມດຳລັດວ່າດ້ວຍການນຳເຂົ້າແລະສົ່ງອອກສິນຄ້າ ສະບັບເລກທີ114/ລບ,ລົງວັນທີ 6 ເມສາ 2011.
- ອີງຕາມດຳລັດ ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າສະບັບເລກທີ180/ນຍ, ລົງວັນທີ 7 ກໍລະກົດ 2009.

ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວ,ວັດທະນະທຳແລະທ່ອງທ່ຽວ ອອກຂໍ້ຕົກລົງ:

### ໝວດທີ 1

### ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ໄດ້ກຳນົດລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນສິ່ງພິມ ຢູ່ສ.ປ.ປ.ລາວ ແລະ ເພື່ອເກັບກຳຂໍ້ມູນສະຖິຕິໃນການນຳເຂົ້າຜະລິດຕະພັນສິ່ງພິມໂດຍຜ່ານລະບອບການອອກໃບອະນຸຍາດນຳເຂົ້າແບບອັດຕະໂນມັດ, ແຕ່ບໍ່ໄດ້ໃຊ້ການຈຳກັດປະລິມານ ຫຼື ມູນຄ່າ ໃນການນຳເຂົ້າ.

**ມາດຕາ 2: ອະທິບາຍຄຳສັບ**

ຜະລິດຕະພັນສິ່ງພິມ ໝາຍເຖິງ ປຶ້ມ, ສິ່ງພິມອີເລັກໂຕຣນິກຫຼືສິ່ງພິມອື່ນເພື່ອຈຳໜ່າຍ

ຊຶ່ງໄດ້ລະບຸໄວ້ໃນໝວດ ລະຫັດເຄົ້າ 4901; 4903; 4905.91.00; 4905.99.00 ແລະ 4906 ໃນສາລະບານອັດຕາພາສີ ຂອງ ສ.ປ.ປ. ລາວ

**ມາດຕາ 3: ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ການນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນສິ່ງພິມຢູ່ ສ.ປ.ປ.ລາວ

## ໝວດທີ 2

## ສິດ ແລະ ເງື່ອນໄຂ ໃນການນຳເຂົ້າແລະຈຳໜ່າຍຜະລິດຕະພັນສິ່ງພິມ

**ມາດຕາ 4: ສິດ ໃນການນຳເຂົ້າແລະຈຳໜ່າຍຜະລິດຕະພັນສິ່ງພິມ**

- ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ ສ.ປ.ປລາວຫຼືຢູ່ຕ່າງປະເທດ ມີສິດນຳເຂົ້າ ຫຼື ສົ່ງອອກ ໂດຍປະຕິບັດຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງ ຂອງ ສ.ປ.ປ. ລາວ;
- ຜູ້ທີ່ຂຶ້ນທະບຽນວິສາຫະກິດຈຳໜ່າຍຜະລິດຕະພັນສິ່ງພິມທີ່ຖືກຕ້ອງຕາມກົດໝາຍ ຂອງ ສ.ປ.ປ.ລາວເທົ່ານັ້ນ ຈຶ່ງມີສິດ ຈຳໜ່າຍຜະລິດຕະພັນສິ່ງພິມ ຢູ່ ສ.ປ.ປ.ລາວ.

**ມາດຕາ 5: ເງື່ອນໄຂ ໃນການຈຳໜ່າຍຜະລິດຕະພັນສິ່ງພິມ**

ວິສາຫະກິດຈຳໜ່າຍຜະລິດຕະພັນສິ່ງພິມ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

1. ຕ້ອງເປັນຜູ້ຈຳໜ່າຍສິ່ງພິມ ປະເພດໃດໜຶ່ງ;
2. ຕ້ອງເປັນຜູ້ໄດ້ຜ່ານການຮຽນ ຫຼື ຝຶກອົບຮົມ ວິຊາການພິມຈຳໜ່າຍ ໂດຍມີໃບຢັ້ງຢືນ;
3. ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງການພິມຈຳໜ່າຍ.

## ໝວດທີ 3

## ການຂໍອະນຸຍາດນຳເຂົ້າຜະລິດຕະພັນສິ່ງພິມ

**ມາດຕາ 6: ການຂໍອະນຸຍາດນຳເຂົ້າຜະລິດຕະພັນສິ່ງພິມ**

ການນຳເຂົ້າຜະລິດຕະພັນສິ່ງພິມຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າຈາກກົມພິມຈຳໜ່າຍ, ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 7: ເອກະສານຂໍອະນຸຍາດນຳເຂົ້າຜະລິດຕະພັນສິ່ງພິມ**

ເອກະສານຂໍອະນຸຍາດນຳເຂົ້າຜະລິດຕະພັນສິ່ງພິມ ປະກອບມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າຜະລິດຕະພັນສິ່ງພິມ
2. ສຳເນົາຂອງເອກະສານຕາມແຕ່ລະກໍລະນີ:

- ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານທີ່ຖືກຕ້ອງຕາມລະບຽບກົດໝາຍ ( ສຳລັບວິສາຫະກິດ ທີ່ຢູ່ ສ.ປ.ປ. ລາວ )

- ເອກະສານຂຶ້ນທະບຽນດຳເນີນທຸລະກິດ ອອກໃຫ້ໂດຍທາງການ ຂອງປະເທດກ່ຽວຂ້ອງ ທີ່ຖືກຕ້ອງຕາມລະບຽບກົດໝາຍ ( ສຳລັບວິສາຫະກິດບໍ່ຢູ່ ສ.ປ.ປ. ລາວ )

3. ບັນຊີລາຍການປຶ້ມ-ສິ່ງພິມ ທີ່ຕ້ອງການນຳເຂົ້າ.

ເອກະສານທີ່ເປັນພາສາຕ່າງປະເທດຕ້ອງແປເປັນພາສາລາວໂດຍມີການຢັ້ງຢືນຈາກ ສຳນັກງານ ທະບຽນສານ ຂອງ ສ.ປ.ປ. ລາວ.

**ມາດຕາ 8: ໃບອະນຸຍາດນຳເຂົ້າຜະລິດຕະພັນສິ່ງພິມ**

ການອອກ, ການປ່ຽນແປງ ແລະ ອາຍຸຂອງໃບອະນຸຍາດນຳເຂົ້າຜະລິດຕະພັນສິ່ງພິມ ໃຫ້ປະຕິບັດຕາມດຳລັດ 180/ນຍ, ລົງວັນທີ 7 ມິຖຸນາ 2009 ວ່າດ້ວຍຂັ້ນຕອນການອອກອະນຸຍາດນຳເຂົ້າສິນຄ້າ. ໃບອະນຸຍາດນຳເຂົ້າຜະລິດຕະພັນສິ່ງພິມບໍ່ສາມາດໂອນໃຫ້ຜູ້ອື່ນໄດ້

**ມາດຕາ 9: ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມແລະຄ່າບໍລິການສຳລັບການອອກແລະການປ່ຽນແປງຂອງໃບອະນຸຍາດນຳເຂົ້າຜະລິດຕະພັນສິ່ງພິມ ແມ່ນໃຫ້ອີງຕາມລັດຖະບັນຍັດ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 10: ການສະໜອງເອກະສານໃນເວລານຳເຂົ້າຜະລິດຕະພັນສິ່ງພິມ**

ໃນເວລານຳເຂົ້າຕົວຈິງ, ຜູ້ນຳເຂົ້າຕ້ອງສະແດງເອກະສານດັ່ງຕໍ່ໄປນີ້ໃຫ້ເຈົ້າໜ້າທີ່ພາສີ:

1. ໃບອະນຸຍາດນຳເຂົ້າຜະລິດຕະພັນສິ່ງພິມ ທີ່ອອກພາຍໃຕ້ຂໍ້ຕົກລົງສະບັບນີ້;
2. ເອກະສານອື່ນໆທີ່ກ່ຽວຂ້ອງ ຕາມລະບຽບການຂອງພາສີ.

## ໝວດທີ 4

## ການຕິດຕາມກວດກາ

**ມາດຕາ 11: ການຕິດຕາມ**

ພາຍຫຼັງທີ່ນຳເຂົ້າຜະລິດຕະພັນສິ່ງພິມແລ້ວ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ນຳເຂົ້າມານັ້ນ ຕ້ອງແຈ້ງຈຸດປະສົງເປົ້າໝາຍ ພ້ອມທັງ ແຜນການອັນລະອຽດແຕ່ລະໄລຍະຂອງການນຳໃຊ້ຜະລິດຕະພັນສິ່ງພິມ ໃຫ້ກົມພິມຈຳໜ່າຍ, ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ພາຍໃນກຳນົດເວລາ 7 ວັນລັດຖະການ ນັບແຕ່ມື້ທີ່ໄດ້ນຳເຂົ້າຜະລິດຕະພັນສິ່ງພິມເປັນຕົ້ນໄປ.

ມາດຕາ 12: ການກວດກາ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ້ອງດຳເນີນກິດຈະການ ການນຳໃຊ້ຜະລິດຕະພັນສິ່ງພິມ ເຊັ່ນ: ການບໍລິການການອ່ານ, ການຮຽນການສອນ, ການຈຳໜ່າຍ ແລະ ອື່ນໆ ພາຍໃຕ້ການຄຸ້ມຄອງ,ກວດກາຂອງກົມພິມຈຳໜ່າຍ ແລະ ໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍວ່າດ້ວຍການພິມຈຳໜ່າຍ ພ້ອມທັງກົດໝາຍອື່ນໆທີ່ກ່ຽວຂ້ອງ.

## ໝວດທີ 5

### ບົດບັນຍັດສຸດທ້າຍ

ມາດຕາ 13: ການຈັດຕັ້ງປະຕິບັດ

ມອບໃຫ້ກົມພິມຈຳໜ່າຍເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ.

ມາດຕາ 14: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດໃຊ້ໄດ້ ພາຍຫຼັງ 30 ວັນ ນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ

ລັດຖະມົນຕີວ່າການ

ກະຊວງຖະແຫຼງຂ່າວ,ວັດທະນະທຳແລະທ່ອງທ່ຽວ

ສຈ.ດຣ. ບໍ່ແສງຄຳ ວົງດາລາ